# ໄຂກອງປະຊຸມເປີດກວ້າງຄົບຄະນະບໍລິຫານງານພັກ ທະນາຄານແຫ່ງ ສປປ ລາວ




ເພື່ອຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ການຈັດຕັ້ງວາລະແຫ່ງຊາດໃຫ້ປະກົດຜົນເປັນຈິງ. ໃນຕອນເຊົ້າຂອງວັນທີ 25 ກໍລະກົດ 2022 ທີ່ ສະໂມສອນສະຖາບັນທະນາຄານ, ນະຄອນຫຼວງວຽງຈັນ, ກອງປະຊຸມເປີດກວ້າງຄົບຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ 6 ສະໄໝທີ IV ໄດ້ໄຂຂຶ້ນ ໂດຍການເປັນປະທານຂອງສະຫາຍ ບຸນເຫຼືອ ສິນໄຊວໍຣະວົງ, ເລຂາຄະນະພັກ ທຫລ, ຜູ້ວ່າການ ທຫລ ພ້ອມດ້ວຍການເຂົ້າຮ່ວມຂອງຄະນະບໍລິຫານງານພັກ ທຫລ, ຄະນະໜ່ວຍພັກ-ຄະນະພັກຮາກຖານ, ຄະນະກົມ, ຄະນະສາຂາ ທຫລ ປະຈຳພາກ ແລະ ພະນັກງານຫຼັກແຫຼ່ງ ນຳພາເຂົ້າຮ່ວມ.

ກອງປະຊຸມໄດ້ໄຂຂຶ້ນທ່າມກາງຄວາມເຄັ່ງຮ້ອນຂອງສະພາບບັນຫາຄວາມຂັດແຍ່ງລະຫວ່າງລັດເຊຍ ແລະ ອູເກຣນ ໄດ້ສົ່ງຜົນກະທົບຕໍ່ລາຄານ້ຳມັນ ເຊິ່ງເປັນປັດໃຈຂອງການຜະລິດໃຫ້ສູງຂຶ້ນ ແລະ ສ້າງຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ເງິນເຟີ້, ອັດຕາແລກປ່ຽນອ່ອນຄ່າ ແລະ ອື່ນໆ ເຊິ່ງໄດ້ສົ່ງຜົນສະທ້ອນເຖິງຊີວິດການເປັນຢູ່ຂອງປະຊາຊົນ. ໃນກອງປະຊຸມໄດ້ເຊື່ອມຊຶມກຳແໜ້ນມະຕິກອງປະຊຸມຄົບຄະນະຄັ້ງທີ 4 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI; ການຜ່ານບົດສະຫຼຸບຕີລາຄາການຊີ້ນຳ-ນຳພາວຽກງານຂອງຄະນະບໍລິຫານງານພັກ ທຫລ ປະຈຳ 6 ເດືອນຕົ້ນປີ 2022; ແຜນວຽກຈຸດສຸມເຄັ່ງຮ້ອນໄລຍະ 6 ເດືອນທ້າຍປີ 2022; ເຜີຍແຜ່ເນື້ອໃນສຳຄັນຂອງການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ. ໃນນີ້, ມາດຕະການຈຸດສຸມໃນ 6 ເດືອນ ທ້າຍປີ ທີ່ ທຫລ ກຳລັງສຸມໃສ່ຈັດຕັ້ງປະຕິບັດ ປະກອບມີ: 1. ມາດຕະການຮັກສາສະຖຽນລະພາບເງິນຕາ 2. ມາດຕະການຮັກສາສະຖຽນລະພາບທາງດ້ານການເງິນ 3. ມາດຕະການພັດທະນານະວັດຕະກຳທາງດ້ານການເງິນ ແລະ ການທັນ

ເປັນທັນສະໄໝ 4. ມາດຕະການດ້ານການຮ່ວມມືສາກົນ 5. ມາດຕະການປັບປຸງຄວາມເຂັ້ມແຂງຂອງບັນດາສາຂາ ທຫລ ປະຈຳພາກ ແລະ 6. ມາດຕະການດ້ານການຈັດຕັ້ງ, ກໍ່ສ້າງພະນັກງານ ແລະ ການກວດກາ.






ກອງປະຊຸມໄດ້ດຳເນີນມາເປັນເວລາ 1 ວັນເຄິ່ງ ແລະ ໄດ້ປິດລົງໃນຕອນເຊົ້າຂອງມື້ນີ້ (26 ກໍລະກົດ) ຜູ້ເຂົ້າຮ່ວມກອງປະຊຸມໄດ້ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງຂອງຕົນ ຄົ້ນຄວ້າລົງເລິກ ແລະ ແລກປ່ຽນທັດສະນະຄວາມຄິດເຫັນຢ່າງກົງໄປກົງມາ, ກ້າຍົກໃຫ້ເຫັນດ້ານອ່ອນ-ຂໍ້ຄົງຄ້າງຂອງແຕ່ລະໜ້າວຽກ ເພື່ອເປັນພື້ນຖານໃນການກຳນົດທິດທາງປັບປຸງແກ້ໄຂຕົວຈິງໃນຕໍ່ໜ້າ ເຮັດໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຕາມຄາດໝາຍ.




# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ